ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

0419

ເລກທີ .............../

ນະຄອນຫຼວງວຽງຈັນ, ວັນທີ........13 MAR 2015........

**ຄຳສັ່ງ**
**ຂອງ ລັດຖະມົນຕີ**
**ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນ ການກວດກາ ແລະ ຢັ້ງຢືນສຸຂານາໄມພືດ ສຳລັບ ພືດ ແລະ ຜະລິດຕະພັນພືດ ສົ່ງອອກ ໄປຍັງ ບັນດາປະເທດສະຫະພາບເອີຣົບ (EU)**

**ເຖິງ:** ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງການພືດ ສະບັບເລກທີ 06/ສພຊ, ລົງວັນທີ 09/12/2008.
- ອີງຕາມ ດຳລັດ ແນະນຳປະຕິບັດ ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 229/ລບ, ລົງວັນທີ 31/05/2012.
- ອີງຕາມ ແຈ້ງການ ຂອງຄະນະກຳມະທິການ ອີຢູ ກ່ຽວກັບ ສຸຂະພາບ ແລະ ຜູ້ຊົມໃຊ້ ສະບັບເລກທີ (2015) 709661 , ລົງວັນທີ 19/02/2015 (Ref. Ares(2015)709661 - 19/02/2015).
- ອີງຕາມ ບົດລາຍງານ ຂອງກົມປູກຝັງ ສະບັບເລກທີ 024/ກປຝ, ລົງວັນທີ 27/02/2015.

ເພື່ອສ້າງຄວາມເຊື່ອໝັ້ນ ແລະ ປົກປ້ອງພາບພົດຂອງຜະລິດຕະພັນກະສິກຳ ແລະ ປ່າໄມ້ ເວົ້າລວມ, ເວົ້າສະເພາະການຜະລິດພືດຜັກເປັນສິນຄ້າ ຢູ່ ສປປ ລາວ ທີ່ ກຳລັງມີທ່າອ່ຽງສົ່ງອອກໄປຕ່າງປະເທດ ນັບມື້ນັບຂະຫຍາຍໂຕ ຊຶ່ງເປັນທີ່ຍອມຮັບ ຂອງ ຕະຫຼາດ ພາກພື້ນ ແລະ ສາກົນ. ເພື່ອຫຼີກເວັ້ນຜົນກະທົບ ຕໍ່ ຜະລິດຕະພັນພືດຜັກ ຂອງ ສປປ ລາວ ໄປຍັງ ບັນດາປະເທດສະຫະພາບເອີຣົບ ພ້ອມທັງຮັບປະກັນການປະຕິບັດຕາມມາດຕະຖານສາກົນ ດ້ານມາດຕະການສຸຂານາໄມພືດ ຂອງສົນທິສັນຍາປ້ອງກັນພືດສາກົນ (ISPMs, IPPC) ແລະ ລະບຽບການນຳເຂົ້າດ້ານສຸຂານາໄມພືດ ຂອງສະຫະພາບເອີຣົບ ຫຼື ອີຢູ.

**ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:**

1. ມອບໃຫ້ ກົມປູກຝັງ ອອກແຈ້ງການ, ສ້າງຄູ່ມືວິຊາການ ກ່ຽວກັບ ຫລັກການ ແລະ ວິທີການດ້ານສຸຂານາໄມພືດ ສຳລັບ ການສົ່ງອອກ ພືດ, ຜະລິດພັນພືດ ໄປຍັງ ບັນດາປະເທດສະຫະພາບເອີຣົບ,ຈັດກອງປະຊຸມວິຊາການ, ທັດສະນະສຶກສາ ເພື່ອຖອດຖອນບົດຮຽນ ແລະ ປະສົບປະການ ກັບ ຕ່າງປະເທດ ໂດຍສະເພາະແມ່ນ ສສ ຫວຽດນາມ, ລາຊະອານາຈັກໄທ, ພ້ອມທັງຝຶກອົບຮົມ, ເຜີຍແຜ່ ແລະ ແນະນຳວິທີການຈັດຕັ້ງປະຕິບັດໂດຍໃຫ້ລົງເລິກແຕ່ລະມາດຕະການລະອຽດໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານມາດຕະການສຸຂານາ

ໄມພືດ ຂອງ ສົນທິສັນຍາປ້ອງກັນພືດສາກົນ ແລະ ລະບຽບການນຳເຂົ້າດ້ານສຸຂານາໄມພືດ ຂອງ ບັນດາປະເທດສະຫະພາບເອີຣົບ;

2. ໃຫ້ກົມປູກຝັງໃນນາມເປັນອົງການປ້ອງກັນພືດແຫ່ງຊາດ (NPPO) ແຈ້ງໃຫ້ ອົງການປ້ອງກັນພືດຂອງປະເທດນຳເຂົ້າ ກ່ຽວກັບ ການປອມແປງໃບຢັ້ງຢືນສຸຂານາໄມພືດ ຫຼື ໃບຢັ້ງຢືນສຸຂານາໄມພືດ ທີ່ບໍ່ຖືກຕ້ອງຕາມຫຼັກການປ້ອງກັນພືດທີ່ໄດ້ກຳນົດໄວ້ ໃຫ້ທັນກັບສະພາບການ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ລະບົບການກວດກາ ແລະ ການຢັ້ງຢືນສຸຂານາໄມພືດ ຂອງ ສປປ ລາວ.
3. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງ ຊີ້ນຳ ຂະແໜງປູກຝັງ ແລະ ດ່ານປ້ອງກັນພືດໃນຂອບເຂດທົ່ວປະເທດ ຢຸດຕິ ແລະ ເອົາໃຈໃສ່ສະກັດກັ້ນການອອກໃບຢັ້ງຢືນສຸຂານາໄມພືດ ໃຫ້ພືດ ແລະ ຜະລິດພັນພືດ ທີ່ບໍ່ແມ່ນຜະລິດຕະພັນກະສິກຳ ແລະ ປ່າໄມ້ ຫຼື ປູກ ຢູ່ໃນ ສປປ ລາວ ແລ້ວສົ່ງອອກຕໍ່ ໄປປະເທດທີ 3 ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍປ້ອງກັນພືດ ຂອງ ສປປ ລາວ ແລະ ມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ສະບັບ ທີ 7 ແລະ 12 (ISPMs 7, 12).
4. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງ ຊີ້ນຳ ຂະແໜງປູກຝັງ ແລະ ດ່ານປ້ອງກັນພືດ ໃຫ້ເອົາໃຈໃສ່ການກວດກາ ພືດ, ຜະລິດຕະພັນພືດ ແລະ ແຫລ່ງປູກພືດ ຢ່າງເຂັ້ມງວດ ກ່ອນອອກໃບຢັ້ງຢືນສຸຂານາໄມພືດ ທຸກຄັ້ງ.
5. ໃຫ້ທຸກພາກສ່ວນເສດຖະກິດພ້ອມກັນເອົາໃຈໃສ່ ແລະ ສະກັດກັ້ນການນຳເຂົ້າພືດ ແລະ ຜະລິດຕະພັນພືດ, ໂດຍສະເພາະແມ່ນ ພືດຜັກສົດ ເຊັ່ນ: ຜັກຫອມປ້ອມ, ຜັກບົ່ວລະພາ, ຜັກກະເພົາ, ໝາກເຜັດ, ໝາກຖົ່ວ, ໝາກເຂືອ, ໝາກມະລະ... ທີ່ມາຈາກຕ່າງປະເທດ ແລ້ວສົ່ງອອກຕໍ່ ໃນນາມ ພືດ ແລະ ຜະລິດຕະພັນພືດຂອງ ສປປ ລາວ ໄປຍັງບັນດາປະເທດສະຫະພາບ ເອີຣົບ ທີ່ມີຄວາມສ່ຽງສູງຈາກການຕິດແປດສັດຕູພືດຕ່າງແດນ (Exotic pests) ຊຶ່ງອາດເກີດມີຜົນເສັຍຫາຍທາງດ້ານເສດຖະກິດ ແລະ ຜົນກະທົບ ຕໍ່ ການຜະລິດກະສິກຳ ຂອງ ສປປ ລາວ ແລະ ປະເທດທີ່ນຳເຂົ້າ.
6. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເອົາໃຈໃສ່ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ຄຳສັ່ງສະບັບນີ້ ມາເປັນ ນິຕິກຳສະເພາະ ແລະ ແຜນຈັດຕັ້ງປະຕິບັດລະອຽດ ພາຍໃນແຂວງຂອງຕົນ.
7. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້**

ບ່ອນນຳສົ່ງ:
- ລັດຖະມົນຕີ ຊ່ວຍວ່າການ ກະຊວງ ກປ ທ່ານລະ 01 ສະບັບ
- ກົມນະໂຍບາຍການຄ້າຕ່າງປະເທດ (ຈຸດແຈ້ງ SPS) 01 ສະບັບ
- ກົມແຜນການ (ຈຸດສອບຖາມ SPS) 01 ສະບັບ
- ກົມປູກຝັງ 01 ສະບັບ
- ພະແນກ ກປ ແຂວງ, ນະຄອນຫລວງ 01 ສະບັບ
- ຂະແໜງປູກຝັງ 01 ສະບັບ
- ດ່ານປ້ອງກັນພືດ 01 ສະບັບ

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

ວິໄລວັນ ພົມເຂ